# ທ້າວຄຳສອນ _ ນາງປາງຄຳ

ຮິບ ໂຮມ

ໂດຍ

ວິລຽມ ພຣະໄຊຍະວົງ

# ຄຳນຳ

**ທ້າວຄຳສອນ - ນາງປາງຄຳ** ເປັນວັນນະຄະດີລາວເກົ່າແກ່ ທີ່ເວົ້າເຖິງໂສກ ແລະລັກສະນະອັນດີງາມຂອງຄູ່ຜົວເມັຍ ສອນໃຫ້ຄູ່ຜົວເມັຍມີຄວາມເຄົາຣົບ ປາກາງ ຮັກຫອມ ນັບຖື ຊຶ່ງກັນແລະກັນ.

ວັນນະຄະດີບູຮານລາວສະບັບນີ້ ໄດ້ຖືກຣິຈນາໂດຍ ພຣະອະຣິຍານຸວັຕຣ໌ ເຂມຈະຣິເຖຣະ ເຈົ້າອາວາດ ວັດມະຫາຊັຍ ແຂວງມະຫາສາຣະຄາມ ໃນປີ ພ.ສ. ໒໕໑໓ ( ຄ.ສ. ໑໙໗໐ ). ຕົ້ນສະບັບຂອງວັນນະຄະດີຊຸດນີ້ ເປັນໃບລານ ອັກສອນລາວເດີມ ໂຕທັມ. ພຣະອາຈານອະຣິຍານຸວັຕຣ໌ ໄດ້ຈັດພິມອອກເປັນອັກສອນໄທຍ໌ປັດຈຸບັນ. ປີ ໑໙໘໖ ເວລາຍັງເປັນອົພຍົບ ຢູ່ປະເທດໄທຍ໌ນັ້ນ ຂ້າພະເຈົ້າໄດ້ຮັບ ວັນນະຄະດີລາວສະບັບນີ້ ຈາກ**ອາຈານຈາຣຸວັນທັມວັດ** ແຫ່ງ**ມະຫາວິທຍາລັຍສຣີນະຄຣິນວິໂຣດ** ມະຫາສາຣະຄາມ. ເມື່ອໄດ້ອ່ານມໍຣະດົກອັນລ້ຳຄ່າ ຂອງວັນນະກັມບູຮານລາວ ສະບັບນີ້ແລ້ວ ເຫັນວ່າມີຄວາມສຳຄັນຫລາຍທີ່ສຸດ ຂ້າພະເຈົ້າຈຶ່ງໄດ້ ພະຍາຍາມຮຽບຮຽງຄືນ ຈາກພາສາໄທຍ໌ ມາເປັນພາສາລາວ ອີງຕາມຄວາມສາມາດທີ່ຕົນມີ. ດັ່ງນັ້ນ ຖ້າຫາກວ່າ ມີຄວາມຂາດຕົກບົກພ່ອງປະການໃດ ຂໍທ່ານນັກປາດ ອາຈານ ກະຣຸນາໄດ້ຊ່ວຍແນະນຳ ມາຫາຂ້າພະເຈົ້າດ້ວຍ ເພື່ອຈະໄດ້ດັດແປງ ແກ້ໄຂ ໃຫ້ເໝາະສົມ.

ໃນປີ ໑໙໗໗ **ກົມວັນນະຄະດີ ກະຊວງສຶກສາທິການ** ແຫ່ງ **ພຣະຣາຊອານາຈັກລາວ** ກໍໄດ້ພິມໜັງສື ນິທານທ້າວຄຳສອນ ຊຶ່ງມີເນື້ອໃນ ລັກສະນະຄ້າຍຄືກັນກັບ ທ້າວຄຳສອນ - ນາງປາງຄຳ. ປັດຈຸບັນນີ້ ເປັນການຫາໄດ້ຍາກ ບໍ່ມີຜູ້ພິມອອກຕື່ມ. ມາໃນໂອກາດນີ້ ຂ້າພະເຈົ້າ ຂໍສະແດງຄວາມຂອບອົກຂອບໃຈ ມາຍັງບັນດາທ່ານຜູ້ມີຄວາມສົນໃຈ ແລະຢາກຮັກສາ ວັນນະຄະດີຂອງຊາດໄວ້.

ວິລຽມ ພຣະໄຊຍະວົງ

ບັດນີ້ ຈັກກ່າວເຖິງບາບ່າວທ້າວ ຈອມປະເສີດ ຄຳສອນ
ທ້າວກໍ່ ແປະຕີນມື ຢູ່ຄອມເຖນເຈົ້າ
ບົວລະບັດໄຫວ້ ຟືນໄຟທຸກເຊົ້າຄ່ຳ
ຕັ້ງນ້ຳອຸ່ນນ້ຳຮ້ອນ ແລງເຊົ້າບໍ່ໄດ້ໄລ ແທ້ແລ້ວ
ຕັ້ງຫາກ ດູແຜ່ນແຜ້ງ ຮັກຍິ່ງມະຫາເຖນ
ແຕ່ງກຸຕິວິຫານ ກວດດີປັດແຜ້ວ
ອັນວ່າ ບາຄານທ້າວ ຟັງຄຳເຖນບອກ ນັ້ນແລ້ວ
ທ້າວບໍ່ຄ້ານ ຂັນສູ້ຊູອັນ ເຈົ້າເອີຍ
ປາງນັ້ນ ມະຫາເຖນເຈົ້າ ກອຍໃຈຮັກຍິ່ງ
ທ່ານນີ້ ຕັ້ງຫາກເຮັດແຜ່ນແຜ້ງ ວາງໃຫ້ຊອບກະໃຈ ແທ້ແລ້ວ
ຄືວ່າ ເຖິງຍາມສວາຍມາແລ້ວ ບາຄານພຽນສູດ
ຄັນວ່າ ເຖິງຍາມເພື່ອເຊົ້າ ບາທ້າວແຕ່ງສາລາ ເຈົ້າເອີຍ
ພໍ່ເພື່ອ ເຖິງແລງມາແລ້ວ ສແວງຫາຜາບອອກ ແທ້ດາຍ
ເພື່ອກາງຄືນຮອດແລ້ວ ດັງໄຟໃຕ້ຈູດເຜົາ
ປາງເພື່ອ ມະຫາເຖນເຈົ້າ ເຂົ້ານອນນິດທະນ່ງ ເຈົ້າເອີຍ
ບາບ່າວທ້າວບີບຄັ້ນ ຄຳເນື້ອແຂ່ງຂາ
ເພື່ອນັ້ນ ໝື່ນນານໄດ້ ຫຼາຍປີຂຶ້ນໃຫຍ່ ມາແລ້ວ
ທ້າວກໍ່ຄຶດຄ້ອຍໆ ຫາເຜົ້າຍອດນາງ ແທ້ດາຍ
ບາກໍ່ ຄຶດຢາກໄດ້ ເມັຍມິ່ງຫຽມອກ
ກໍ່ຈິ່ງ ໄຂຄຳຄວນ ຕໍ່ມະຫາເຖນເຈົ້າ
ຍໍມືໄຫວ້ ເໜືອຫົວກົ້ມຂາບ ພຣະເອີຍ
ຂ້ານ້ອຍ ສັງມາຄຶດຢາກໄດ້ ເມັຍຊ້ອນແທບຫຽມ ແທ້ດາຍ
ຂໍເຜົ່າ ມະຫາເຖນເຈົ້າ ໄຂຄຳບົນບອກ

| | | | |
|---|---|---|---|
| ຜີວ່າ | ຍິງໃດຍັງຄືກັນ | ຂໍເຈົ້າໂຜດຜາຍ | ແດ່ຖ້ອນ |
| | ຍິງໃນໂລກນີ້ | ຜູ່ປະເສີດບຸນມີ | ເຈົ້າເອີຍ |
| ຜູ້ຂ້າ | ຈັກເອົາເປັນເມັຍຂວັນ | ດັ່ງລືຊຸຖູນຄ້ຳ | ພຣະເອີຍ |
| ເມື່ອນັ້ນ | ມະຫາເຖນເຈົ້າ | ໄຂຄ່າຕ້ານກ່າວ | |
| ອັນວ່າ | ຍິງໃນລຸ່ມຟ້າ | ເພື່ອລົ້ນອະເນກນອງ | ທ້າວເອີຍ |
| ເຈົ້າຈັກ | ເອົາເປັນນຶ່ງຕົ້ນ | ເມັຍຂວັນກັບປະທິບ | |
| ຍິງໃດ | ໄດ້ໂສກຄືຕ້ອງ | ຫຍຸມຂ້າງກໍ່ຈຶ່ງຄວນ | ແທ້ແລ້ວ |
| ຫລອນທໍ່ | ໄດ້ເຫັນໜ້າແລ້ວ | ຮູບຮ່າງໂສມງາມ | ດັ່ງນັ້ນ |
| | ພາຍລຸນເລີຍ | ຈັກຖ່າຍເວີນເປັນຮ້າຍ | |
| ຍິງໃດ | ເຮັດກິນພ້ອມ | ພໍ່ເຫືອທັງປາແດກ | |
| ຍິງນັ້ນ | ແມ່ນເປັນຂ້ອຍເພິ່ນຮ້ອຍຊຸ້ນ | ຄວນໃຫ້ໄຖ່ເອົາ | ທ່ານເອີຍ |
| ຍິງໃດ | ເອເລທ້ອງ | ປູມພອງອູ້ມບາດ | |
| ຍິງນັ້ນ | ລອນທໍ່ເປັນຮູບຮ້າຍ | ບຸນເຈົ້າຫາກມີ | ແທ້ດາຍ |
| ຊາຍໃດ | ໄດ້ເຂົ້າຢູ່ຊ້ອນ | ສຸກຮ່ວມບໍ່ຮົມ | |
| | ສົມບັດໃນເຮືອນມີ | ພ່າເພງເຕັມຢ້າວ | ຫັ້ນແລ້ວ |
| ຍິງໃດ | ດໍ່ຕົກປ້ອງ | ທາງຕາເດງພໍ່ສະນ່ອຍ | |
| ເມື່ອນາງ | ຍົກຍ່າງຍ້າຍ | ພໍ່ດ້ານເຫິ່ງສເມີ | |
| ແມ່ນວ່າ | ທ້າວໄດ້ເຂົ້າຢູ່ຊ້ອນ | ຮຽງຮ່ວມເປັນເມັຍ | ເມື່ອໃດ |
| ຍູທ່າງ | ລະທົ້ງຄວາມສຸກ | ນັ່ງປອງເປັນເຈົ້າ | |
| ຍິງໃດ | ຍ່າງບາດກວ້າງ | ຕີນຄວ່າງທໍ່ຣະນີ | ນັ້ນນາ |
| ອັນວ່າ | ຕົນໂຕນາງພາຍໃນ | ກໍ່ຫາກເປັນລັງລ້າວ | |
| | ບໍ່ອາດມີໃຍພຽງ | ເຮືອນຊານທຸກຂະໜອດ | ແທ້ດາຍ |
| ຍິງໃດ | ຂົນຕາຫຍຸ້ງ | ທາງປາຍຍອດຍິ່ງ | |

| | | | |
|---|---|---|---|
| ຍິງນັ້ນ | ລູຂີ້ຄ້ານ | ເຂັນຝ້າຍມັກນອນ | ແທ້ເດ |
| ແມ່ນວ່າ | ໂສມຮູບງາມດັ່ງຍ້ອຍ | ບາທ້າວຢ່າເອົາ | ແທ້ຜີ |
| ແມ່ນຊິ | ເປັນເມັຍໃຜ | ກໍບໍ່ເປັນເຮືອນຢ້າວ | |
| ຍິງໃດ | ຜົມເປັນສ້ອຍ | ສອງຫູເປັນປີກ | ເຈົ້າເອີຍ |
| ຍິງນັ້ນ | ເງິນບໍ່ຄ້າງຢູ່ໄດ້ | ຜໍຮ້ອຍເຜົ່ານຖົງ | ໄດ້ແລ້ວ |
| ຍິງໃດ | ມີປານດຳຂຶ້ນ | ຈັບກົກຂາດູພາ | |
| ຍິງນັ້ນ | ໃຜຢູ່ໄດ້ກ້າວຕ້ານ | ໂອມໄດ້ໄຊກມີ | ແທ້ແລ້ວ |
| ຍິງໃດ | ຈົບຈິກຕ້າ | ຜົມແດງທາງໜ້າຜາກ | |
| ຍິງນັ້ນ | ໂສມຮູບຮ້າຍ | ເຕີຍມ້າງສາສນາ | |
| ຍິງໃດ | ໂຂໂນໜ້າ | ຄືຜູ້ຊາຍສັກຢາດ | |
| ຍິງນັ້ນ | ໃຈໂລບລົ້ງ | ເຕີຍມ້າງສາສນາ | |
| | ມີໃຈຖ່ອງແທ້ | ບໍ່ຫິງເບິ່ງທາງບຸນ | ທ່ານເອີຍ |
| ຍິງໃດ | ປາຍມືດ້ານ | ຝ່າມືຊ້ຳຜັດໃຫຍ່ | |
| | ທັງຝ່າຕີນ | ເບິ່ງແລ້ວສເມີດ້ານດັ່ງດຸງວ | |
| ຍິງນັ້ນ | ທຸກບໍ່ເຫືອດບໍ່ມົ້ວ | ບາທ້າວຢ່າເອົາ | |
| ຍິງໃດ | ຫັນຕາແຂ້ວ | ຄືສັງປຸ່ນປຸບ | |
| | ແຂ້ວຫ່າງແທ້ | ສເມີຜູ້ງດັ່ງໜູ | ນັ້ນດາຍ |
| ຍິງນັ້ນ | ທຸກແຕ່ນ້ອຍ | ເຖິງເທົ້າຮອດຕາຍ | |
| ຍິງໃດ | ຝ່າຕີນກວ້າງ | ກົກຂາຫົ້ມແຂ່ງໃຫຍ່ | |
| ຍິງນັ້ນ | ໃຜເຂົ້າຢູ່ຊ້ອນ | ສອນໄດ້ກໍບໍ່ຟັງ | |
| ມັນກໍ | ດີກີ່ແທ້ | ໂຖງໂລກໂລກາ | ແທ້ດາຍ |
| ອັນແຕ່ | ໃນສົງສານ | ບໍ່ອາດຫັນຫຼຸມໄດ້ | |
| ຍິງໃດ | ຫົວຕີນສູງຂຶ້ນ | ຄືຫົວອອງເຕົ່າ | |

| | | | |
|---|---|---|---|
| ຍິງນັ້ນ | ໃຈຊື່ແທ້ | ປະສົງຕັ້ງຕໍ່ຜົວ | ເຈົ້າເອີຍ |
| | ກໍບໍ່ມັກເຫັນຊູ້ | ຊາຍອື່ນມາຊົມ | |
| ກໍທໍ່ | ຈົງໃຈຮັກ | ຕໍ່ຜົວດີຄອຍໆ | |
| ຍິງນັ້ນ | ແມ່ນຊິທຳການສ້າງ | ອັນໃດນຳເຮືອງຮຸ່ງ | ແທ້ແລ້ວ |
| | ແສນຊິຈົມຢູ່ພື້ນ | ມາແລ້ວກໍທຳມາຟູ | ເຈົ້າເອີຍ |
| ຍິງໃດ | ທ່າຄົວພ້ອມ | ໝັກເຜາງກ້ອຍລາບ | |
| ກໍບໍ່ | ເຄັມບໍ່ຈືດແທ້ | ແວນຊ້ອຍແຊບນົວ | |
| ຍິງນັ້ນ | ມີບຸນມາກລົ້ນ | ສຸພະໂຍຄນານຊຸນ | ແທ້ດາຍ |
| ແມ່ນວ່າ | ຄ່າປານກາ | ກໍໃຫ້ເອົາມາຊ້ອນ | |
| ຍິງໃດ | ຂີ້ແມງວັນຈັບເຕົ້າ | ໃນລະຫວ່າງຕີນນົມ | ນັ້ນນາ |
| ແມ່ນຊິ | ຄ່າປານຕໍ່ | ກໍໃຫ້ຄອນເອົາແທ້ | |
| ຜິວ່າ | ເປັນຂ້ອຍເພິ່ນຮ້ອຍຊັ້ນ | ຄອນໃຫ້ໄຖ່ເອົາ | ແທ້ດາຍ |
| ຍິງໃດ | ມີທາງຕາຄົ້ວ | ຂີ້ແມງວັນຈັບຢູ່ | |
| ຍິງນັ້ນ | ທຸກບໍ່ເຫືອດບໍ່ມ້ວ | ເປັນຂ້ອຍເພິ່ນຢູ່ເລີງ | ເຈົ້າເອີຍ |
| ຍິງໃດ | ໂປ້ງແຂ່ງນ້ອຍ | ຄົ້ວກ່ອງກວມຕາ | |
| | ຫົວນົມເປັນປານຄ່າ | ກໍທຳມາມີບຸນແທ້ | |
| ໃຜຜູ່ | ໂອມເອົາໄດ້ | ເປັນເມັຍໂຊກຂະໜາດ | ແທ້ດາຍ |
| | ມັນທຳກູປະເສີດແທ້ | ເມືອໜ້າຈິ່ງຂວາງ | ແທ້ແລ້ວ |
| ຍິງໃດ | ໄປມາກົ້ມ | ມູຂັງລົງຕ່ຳ | |
| ຍິງນັ້ນ | ແມ່ນມີບຸນມາກລົ້ນ | ຕົນເຈົ້າບໍ່ຍືນ | ທ້າວເອີຍ |
| ຍິງໃດ | ຜົມເຂີນຫ້ວນ | ສອງຫູໄກຫ່າງ | ໄປນັ້ນ |
| ແມ່ນວ່າ | ໂສມທຳງາມລື່ນລົ້ນ | ມັນນັ້ນບໍ່ດີ | ທ້າວເອີຍ |
| ຍິງໃດ | ສຽງຈາຣະຈາຕ້ານ | ເໝືອນດັ່ງສຽງຊາຍ | |
| ຍິງນັ້ນ | ກໍທຳມາສຸກບໍ່ລ້ອນ | ຈັກຈົນແຄ້ນເມື່ອລຸນ | ທ່ານເອີຍ |

| | | | |
|---|---|---|---|
| ຍິງໃດ | ປາກກ່າວຕ້ານ | ຫົວກ່ອນບຸນມີ | ທ້າວເອີຍ |
| ແມ່ນວ່າ | ເປັນເມັຍໃຜ | ກໍ່ບໍ່ຫລອນພໍ່ຮ້າຍ | |
| ຍິງໃດ | ຜົມສອຍຂຶ້ນ | ເມືອເຖິງລ້ານແງ່ | |
| ຍິງນັ້ນ | ທຸກຮອດເຖົ້າ | ຖອນເວັ້ນຢ່າເອົາ | ແທ້ນີ |
| ຍິງໃດ | ມີຜົມຂຶ້ນ | ຕາແຫຼວຫຼວງຈັບໜ້າຜາກ | |
| | ສັບຂ້າງໃຕ້ | ມັນພົ້ນລື່ນຍາວ | |
| ມັນນັ້ນ | ໃຈພາໂລເພືອ | ສໍ່ສົນຄ່າເວົ້າ | |
| ທໍ່ແຕ່ | ຕັບຄ່າເວົ້າ | ບິນຫາປ້ອຍຄ່າ | |
| ຍິງນັ້ນ | ຕັ້ງຖ່ອຍຮ້າຍ | ຖອນເວັ້ນຫຼີກໄກ | ທ້າວເອີຍ |
| ຍິງໃດ | ໜ້າຜາກກວ້າງ | ດັງໃຫຍ່ໄຂໂມ | ນັ້ນນາ |
| ຍິງນັ້ນ | ເປັນຍິງຂວາງ | ຢ່າເອົາຖອນເວັ້ນ | |
| ຍິງໃດ | ນົມຍານເທົ້າ | ລົງເຖິງທ້ອງອ່ອນ | |
| ຍິງນັ້ນ | ລຽງລູກເຕົ້າ | ເມືອໜ້າແພ່ຫຼາຍ | ເຈົ້າເອີຍ |
| ໃຜຜູ້ | ໂອມເອົາໄດ້ | ເປັນເມັຍແສນປະເສີດ | |
| ແສນຊິ | ຮູບຮ່າງຮ້າຍ | ຖອນໃຫ້ໄກ່ເອົາ | |
| ຍິງໃດ | ນົມສີ່ເຕົ້າ | ເຊື້ອຊາດນານໜາ | |
| ມັນນັ້ນ | ໃຈພາໂລໜັກ | ຖ່ອຍຄົນຖອນເວັ້ນ | ແທ້ແລ້ວ |
| ແມ່ນຊິ | ທ່ານການສ້າງ | ທາງໃດບໍ່ມີຮຸ່ງ | |
| ແສນຊິ | ມີລູກເຕົ້າ | ສອນໄດ້ບໍ່ເຊື່ອຟັງ | ແທ້ດາຍ |
| ຍິງໃດ | ແປະແຫຼະໜ້າ | ສົງສານຊິໃຫ້ຕໍ່ | |
| ຍິງນັ້ນ | ຕັ້ງຖ່ອຍຮ້າຍ | ໃຈສົ້ມບໍ່ເຫືອດດິງ | ແທ້ແລ້ວ |
| ໃຜຜູ້ | ໂອມເອົາໄວ້ | ເປັນເມັຍສອນຍາກ | ຈິງແລ້ວ |
| ມັນນັ້ນ | ເຮັດໜ້າຫຍິບຫຍິ້ງ | ຄ່າຮູ້ກໍບໍ່ມີ | |

| | | | |
|---|---|---|---|
| ຍິງໃດ | ທ່າອ້າຄ້າ | ຂັງຢູ່ໃນອົກ | ນັ້ນນາ |
| | ຢ່າໄດ້ເອົາເປັນເມັຍ | ບໍ່ດີເປັນຮ້າຍ | |
| ແມ່ນວ່າ | ໂສມງາມພຽງ | ສາວສວັນປຸນປຽບ | ກໍ່ດີຖອນ |
| | ໃຫ້ຄ່ອຍພຽນຫຼີກເວັ້ນ | ຢ່າໄດ້ເຂົ້ານັ່ງໜຽມ | |
| ຍິງໃດ | ຂີ້ແມງວັນຈັບສົບເບື້ອງຊ້າຍ | ສົມບັດມັ່ງບຸນມີ | ທ້າວເອີຍ |
| ໃຜຜູ່ | ໂອມເອົາໄດ້ເປັນເມັຍ | ຫາຄູນຍິ່ງ | ຈິງດາຍ |
| ຍິງໃດ | ໂຍນີສ້ວຍ | ດວງປີກ້ວຍຕີບ | |
| ຍິງນັ້ນ | ສູກລື່ນລົ້ນ | ຄ່າໄຮບີ່ທ່ອນມີ | ແທ້ແລ້ວ |
| | ກໍ່ຫາກສັດຊື່ແທ້ | ຕັ້ງຕໍ່ຜົວຕົນ | |
| | ຈັກເຫັຍຣະດາຄົງ | ຢູ່ຍືນເຖິງເຖົ້າ | ຫັ້ນແລ້ວ |
| ຍິງໃດ | ແຂນກົມສ້ວຍ | ຂາວງາມຜິວຜ່ອງ | |
| | ບົ້ວແລນຫຼັງ | ພຽງເພັ້ມລູກຕາ | |
| ຍິງນັ້ນ | ໃຜໄດ້ເຂົ້າຢູ່ຊ້ອນ | ປານກົງຮົ້ມແດງ | ນັ້ນແລ້ວ |
| ຍິງໃດ | ມີກົ່ມຂ | ແຂນບາງຄື້ວກ່ອງ | |
| ຍິງນັ້ນ | ຫຼຸກຮອດເຖົ້າ | ຖືກະເບື້ອງທ່ຽວຂໍ່ | |
| ຍິງໃດ | ຄໍກົມປ້ອງ | ຫາງຕາແດງພ່ສມ່ອຍ | |
| ຍິງນັ້ນ | ມີລູກເຕົ້າ | ເຫຼືອລົ້ນມາກຫຼາຍ | |
| ຍິງໃດ | ເວົ້າປາກຫຼັງ | ເພາມຫົວສຽງມ່ວນ | ເຈົ້າເອີຍ |
| ຍິງນັ້ນ | ມີລູກເຕົ້າ | ຄ່າໄຮ້ແມ່ນບໍ່ມີ | |
| | ຄວນທີ່ເອົາມາຊ້ອນ | ເປັນມິ່ງເມັຍຂວັນ | |
| | ບຸນນາງມີຫຼາຍ | ຈັກບໍ່ເຄືອງຄ່າຮ້ອນ | ແທ້ແລ້ວ |
| ຍິງໃດ | ສຽງປາກຕ້ານ | ຫວານຫູເວົ້າມ່ວນ | |
| | ຕາເຊິດຊ້າຍ | ຄໍປ້ອງຮູບງາມ | |

ຜາສາ ຜົມຍາວໄດ້ ວາປາຍຄືບນຶ່ງ
ຍິງນັ້ນ ຄອນຄ່າລ້ານ ຄ່າຮ້ອນຊອບໜັ້ນ ແທ້ດາຍ
ຍິງໃດ ຕີນມືສ້ອຍ ຂາວເຫຼືອງກ່ຳເຫຼິ່ງ
ຍິງນັ້ນ ຮູ້ແຕ່ງຕັ້ງ ການຢ້າວແມ່ຜົວ ເຈົ້າເອີຍ
ຍິງໃດ ໃບຫູຫ້ອນ ຢຸດປາຍພໍສມ່ອຍ
ຍິງນັ້ນ ເປັນແມ່ຄ້າ ຍັງຊິໄດ້ມັ່ງມີ ເຈົ້າເອີຍ
ຍິງໃດ ຜົມດຳເຫຼື້ອມ ທາງນົກຍູງສົມພາບ ກັນນັ້ນ
ຊາຍໃດ ໄດ້ເຂົ້າຢູ່ຊ້ອນ ຈັກເປັນເຈົ້າເສດຖີ
ຍິງໃດ ອູດຫລູດສ້ອຍ ອົກຫວານະໂພກຕຸ່ມ
ຍິງນັ້ນ ທຸກບໍ່ມົ້ວ ຄວາມໃຮ້ຫາແລ່ນເຖິງ
ຍິງໃດ ຫັນຕາເຂົ້ວ ຍາວເລີງພົ້ນເພື່ອນ ເຈົ້າເອີຍ
ຍິງນັ້ນ ຈັ່ງລູກເຕົ້າ ບໍ່ມີໄດ້ໄທຍ່ສູງ ແທ້ດາຍ
ຍິງໃດ ໄຂໂນໜ້າ ຖອຍແງນສົມກ່ຽວ
ຍິງນັ້ນ ທຸກເທົ້າເຖົ້າ ຖືກະເບື້ອງຄົ່ວຂໍ
ຍິງໃດ ຕີນມືສ້ອຍ ກົກຂາທຶມແກ່ງໃຫຍ່
ຍິງນັ້ນ ມັກໂລບແທ້ ຄືນຮ້ອຍບໍ່ອີ່ມໃຈ ແທ້ແລ້ວ
ແມ່ນວ່າ ແສນຊິທຳການສ້າງ ອັນໃດບໍ່ມີຮຸ່ງ ໄດ້ແລ້ວ
ແມ່ນຊິ ໄປຄ້າໄດ້ມື້ລະຮ້ອຍ ເສັຍຊ້ຳຕື່ມພັນ ນັ້ນແລ້ວ
ຍິງໃດ ຜີສົບດຳຊ້ຳ ສົມໝາກາມອນສຸກ ດັ່ງນັ້ນ
ອັນແຕ່ ຕັນຫາໃນໂລກາ ບໍ່ອາດມີໃຜພຽງ
ຍິງນີ້ ຄົນມີໃຈຖ່ອຍຮ້າຍ ເຈົ້າຢ່າໂອມເອົາ ແທ້ນີ
ຝູງນີ້ ຍິງອະຫັນ ບາບເສລນຳໃຊ້ ແທ້ແລ້ວ
ຄັນວ່າ ຫົວຄິດຢາກໄດ້ ໃຫ້ເປັນມິ່ງເມັຍຂວັນ

ໃຫ້ຄ່ອຍ ພິຈາຣະນາຄິດ ໂສກຍິງດີຮ້າຍ
ໃຫ້ບາບ່າວທ້າວ ຈ່າຈື່ຄຳສອນ ແທ້ນີ
ຄັນວ່າ ຟັງຄຳເຮົາ ທາກາຈັກເຫັນເມືອໜ້າ
ອັນວ່າ ລັກສະນະໂສກພ້ອມ ຝູງໝູ່ຊູມຍິງ ຖ້ວນແລ້ວ
ບາຄານເອີຍ ໃຫ້ຈື່ຈຳເອົາໄວ້
ປາງເມື່ອ ອາຈານເຈົ້າ ຈາຣະຈາສອນສັ່ງ ປາງນັ້ນ
ເພິ່ນໄດ້ບອກໃຫ້ແຈ້ງ ບາທ້າວຊູ່ອັນ ເຈົ້າເອີຍ
ເຈົ້າຈິ່ງ ແຍງທີ່ບ້ານ ຫົນແຫ່ງຄາມ ຜູ້ນຖ້ອນ
ໃຜຜູ້ ຂັນອາສາເປັນເມັຍ ກໍ່ຈິ່ງເອົາເງິນໃຫ້
ມະຫາເຖນບົນບອກແລ້ວ ສອນສັ່ງເລີຍເໝີດ
ທ້າວ ຈິ່ງຟັງຄຳຄູ ກໍ່ຈັກເຫັນເມືອໜ້າ ແທ້ແລ້ວ

ທ້າວຄຳສອນສັ່ງລາ ມະຫາເຖນ ໄປຊອກຫາເມັຍ

ປາງນັ້ນ ຄຳສອນທ້າວ ບໍ່ມີນົບບາດ
ຂ້ານ້ອຍ ຈັກລາໄປສູ່ຫ້ອງ ເມືອບ້ານຊອກຫາ ກ່ອນແລ້ວ
ຫລອນວ່າ ບຸນຫຼາຍໄດ້ ມາບົວຣະບັດອຸ່ນ
ອຸປະຖາກມະຫາເຖນເຈົ້າ ແລງເຊົ້າເບິ່ງແຍງ ນັ້ນແລ້ວ
ຂ້ານ້ອຍ ໄກຈາກເຈົ້າ ບໍ່ມີໄດ້ປິ່ນປົວ
ແຕ່ນັ້ນ ມະຫາເຖນເຈົ້າ ອິນດູບາບ່າວ
ເລີຍລວດຍໍ່ຍື່ນໃຫ້ ຄຳຮ້ອຍໃສ່ມື ເຈົ້າເອີຍ
ກັບທັງ ເງິນຄຳເຜົ້າ ເອົາໄປກໍ່ຕາມຊ່າງ ມິ່ງຖ້ອນ
ໃຫ້ໄດ້ເມັຍໜຸ່ມເໜົ້າ ມາຊ້ອນແທບທອງ ທ້າວເອີຍ

ລືວ່າ ຍັງກະສັນໃຫ້ ຫາອວນຍ້ອຍຍັ່ງ ຢູ່ນັ້ນ
ຮູ້ວ່າ ຍັງຄອງໄວ້ ຄ່າຕ້ານແຕ່ຫັງ ບໍ່
ແຕ່ນັ້ນ ຫ້າວໄປເຖິງບ້ານ ຈາຕ່ນາຣີສາວ ວ່າ
ພົ້ນ ລອນທ່ຫົງທານຕັ້ງ ບໍ່ຕົວະປາກເປັນສຽງ
ໃນມະໂນທວງຈັກ ຈາກຄິງຄືບ້າ ນັ້ນແລ້ວ

ແນມທ່ ຈັກພາກພີ່ນ້ອງ ຂະນັງແຄັນເປົ່າຄາຍ
ຊາດທີ່ ເຮືອສະໝຸດຫລ້າງ ບໍ່ໜີຟອງແຜ້ງໃຫຍ່ ອວນເອີຍ
ນ້ອງຈົງປານີອ້າຍ ຫົງຍານເຍື້ອນໂຜດ
ຜາຍໂຜດອ້າຍ ປາງນີ້ຍດູ ແດ່ຖ້ອນ
ພີ່ກໍ ມາໝ່ຽວນ້ອງ ນົງນາດແພງສີ
ພັນປີຄິດ ໃຄ່ອວນແສນຊຸ້ນ
ໃຫ້ນ້ອງ ໄຂກະບວນເບື້ອງ ຢ່າມີຂືນຂັດຫຼີກ
ຢ່າໄດ້ ຄິດແງ່ເງື້ອນ ງ່າໄວ້ເຊື່ອງເຊີງ ພີ່ຖ້ອນ
ຄັນວ່າ ນ້ອງຊີໄຂລະຫັດເບື້ອງ ຜະຍຸງຄວາມໂດຍຊອບ ດັ່ງນັ້ນ
ຈົ່ງໃຫ້ຄືດຢູ່ຊຸ້ນ ຄະນຶງໄວ້ຢ່າໄລ ແດ່ຖ້ອນ
ອັນວ່າ ສຸດທີ່ທາງໄກລ້າ ເດີນທາງມາຖາມຂ່າວ
ສຸດທີ່ຄອຍລ່າຢຽມ ຫານ້ອງກໍ່ບໍ່ເຫັນ ອຸ່ນເຢີ
ເຈົ້ານໍ່ ນອນໃນຫ້ອງແຈເຮືອນ ຄອງຖ້າພີ່

ແສນຊິຄິດຮອດນ້ອງ ບໍ່ມີເສັຍສູນເປົ່າ ນ້ອງເອີຍ
ເຈົ້າຢູ່ ສຸດສະເໜຫາຝັ້ນ ແຝງທວງຫຽມບໍ່ແຈບ ຮຽມເອີຍ
ຄ່າຮັກຄ່ານັກບໍ່ໄດ້ກ່ອມກົ້ງ ສັງໄລເວັ້ນພາກແພງ
ລືວ່າ ສະເໜຫາແພງແຜ້ວ ໄດ້ມືສອງສາມສີ່ ອວນເອີຍ
ພົ້ນ ສັງມາອາຍນາດນ້ອງ ສະເທີນໜ້າຫ່ວງຫັງ

| | | | |
|---|---|---|---|
| | ພີ່ນີ້ໄດ້ເຫັນໜ້ານ້ອງ | ມັກງຸບກະໃຈອົກ | ແທ້ດາຍ |
| ຄືດັ່ງ | ໄດ້ກືນເຜາງປາ | ແຊບກະໃຈນົວແທ້ | |
| | ມັນຄືໄດ້ກືນຫົວແຫ້ວ | ທວງກະສັນປາກບໍ່ອອກ | ນັ້ນແລ້ວ |
| ບໍ່ວ່າ | ຊິປະຊິລະນາງນາຄນ້ອງ | ໃຫ້ເປັນຮ້າງຫ່າງສະເທີນ | ດອກນາ |
| ອ້າຍຄື | ສາຂາໄມ້ | ໃບໄພປ້ອງຫ່າງ | |
| | ຊູ່ຄົນຊູ່ຢູ່ຕ່າງບ້ານ | ຊິຂໍເຂົ້າຮ່ວມເຮືອນ | ນັ້ນແລ້ວ |
| ໂອ່ນ | ພີ່ກໍຂະນັງອົກແຄ້ນ | ຄາທວງບໍ່ມີສວ່າງ | ນາງເອີຍ |
| ອ້າຍກໍ | ຄຶດຄັ່ງແຄ້ນ | ນ່ານ້ອງເພື່ອຍມະໂນ | |
| | ຈິດໃຈອ້າຍເປັນເພີ້ | ລະເມີຝັນບ້າປ່ວງ | |
| | ນ້ອງບໍ່ຜາຍໂຜດອ້າຍ | ປາງແຄ້ນສ່ວນຊິຕາຍ | ນັ້ນແລ້ວ |
| ຄັນວ່າ | ນ້ອງບໍ່ເອື້ອ | ອັນພີ່ມາຖແລງ | |
| | ອວນຈັກເມັຍຮະສິນເສັຍ | ຄາບອາຍວາງນົ້ວ | |
| ນ້ອງຢ່າ | ໃຫ້ເສັຍປະສົງຊ້ອນ | ເດີນຍຸງອດົ້ນຍາກ | ມາຖ້ອນ |
| | ປະສົງຊົມຈື່ງເວັ້ນ | ຈວນຂ້ອນຮຸ່ງຈວນ | |
| | ຂໍໃຫ້ນາງນາຄນ້ອງ | ກຸນາຜາຍໂຜດ | ແດ່ຖ້ອນ |
| ພີ່ກໍ | ໄດ້ພົບພໍ້ນາຄນ້ອງ | ວອນແລ້ວບໍ່ອື່ຍດູ | ແທ້ນໍ |
| ນ້ອງບໍ່ | ໄດ້ກ່າວເວົ້າ | ຫຼິງເລຄາກະບອນແຝງ | ແລ່ນ |
| | ບໍ່ໄດ້ປານີຜາຍ | ລ່າດູດາຍດູ້ | |
| ພີ່ກໍ | ມາວອນໄຫວ້ | ວອນເສັຍກໍວອນເປົ່າ | ແທ້ນໍ |
| | ຮັກກໍຫາກຮັກນ້ອງເຜົ້າ | ແລທນ່າລ່າດາຍ | ນັ້ນແລ້ວ |
| ພີ່ກໍ | ອຸປະມາໃຫ້ | ອັນໃດຊິຍອນຍາກ | ແທ້ນໍ |
| | ເປັນດັ່ງໄຊໃສ່ໃຕ້ | ຫຼົງຫຼ້າບໍ່ທ່ອນໜານ | |
| ຖືກກໍໃສ່ແຊ່ໄວ້ | ບໍ່ຖືກກໍໃສ່ແຊ່ໄວ້ | ຕາມຊ່າງກະບອນປາ | ນ້ອງເອີຍ |
| ຄັນ | ນ້ອງບໍ່ກູນາຜາຍ | ທ່ອນຊິເປືອງແຍງຮູ້ | ໄດ້ແລ້ວ |

| | | | |
|---|---|---|---|
| | ພັນກໍ່ໃຫ້ພັນທະນັງຝັ້ນ | ສະເໜຫາໄດ້ຮຽງຮ່ອມ | |
| ລູຂໍ່ | ໃຫ້ລຸໂຊກຖ້ອນ | ຮຽມນ້ອງຢ່າລ່າຍພາງ | ແທ້ດາຍ |
| ພີ່ກໍ່ | ມັກຮັກນ້ອງ | ປະສົງຂອດຄະໃຈຈິດ | |
| ຜີລົງ | ກໍ່ໃຫ້ລົງລາຍຍຽວ | ຢ່າໄດ້ເປັນລັງລ້າວ | |
| ສາຂາ | ໃຫ້ສະສ່ອງແຈ້ງ | ເຫັນຮ່ອມໄມຕຣີ | ແດ່ແມ |
| ພັນຂໍ່ | ໃຫ້ພັນທະນັງຄຶດ | ຢ່າໃຫ້ເງິງທາງໃຕ້ | |
| | ຂໍ່ໃຫ້ນົງເຍົາເຍື້ອນ | ກະບວນສີໃສທ່ | |
| ຢ່າໃຫ້ | ເຂີນຂາດແຫ້ງ | ຕັນທ້າງປ່ອງໄຫຼ | ແຕ່ຖ້ອນ |
| ອັນວ່າ | ແປວທະເລກວ້າງ | ໄຫຼແຮງແມ່ນ້ຳທັ່ງ | |
| | ນ້ອງຢ່າກັ້ງໜ່ານຜ້າ | ກາສາເກ້ຍຊິຂາດກາງ | ນັ້ນແລ້ວ |
| ອັນນຶ່ງ | ພີ່ກໍ່ມາໝຽວນ້ອງ | ນົງນາດແພງສີ | |
| ໂອນ່ | ພັນປີອ້າຍ | ບໍ່ມີຍອມຍັງແອ່ວ | ນ້ອງເອີຍ |
| | ປະສົງມາກ່ອມຝັ້ນ | ດອມນ້ອງຂອດສະເໜ | |
| ເຈົ້າຜູ່ | ໂສມສະເຫຼົາໜ້າ | ເທວະດາເພິ່ນລົງເກີດ | ຮຽມເອີຍ |
| ນ້ອງຢ່າ | ໃຫ້ເສັຍຄ່ານັກອ້າຍ | ມາຝັ້ນຝ່າຍອີ່ຮຽມ | |
| | ບົວທອງບໍ່ທ່ອນໜີນ້ຳ | ຜຍອງຟູເທົ້າຊົ່ວ | ຊິວັງແລ້ວ |
| | ພຣະຈັນບໍ່ທ່ອນພາກຂ້າງ | ໜີພົ້ນຫລຸ່ມສະເໜນ | ໄດ້ແລ້ວ |
| ເຈົ້າຜູ່ | ຕາສາສ້ອຍ | ຄືເທົາຂຽວອ່ອນ | |
| ຢ່າໄດ້ | ຕັດຂາດຂ້ອນ | ໃຫ້ເສັຍເບື້ອງຮ່ອມແພນ | ພີ່ຖ້ອນ |
| ໘໕ ພັນ | ຫຽມດັ່ງອາຊະນັຍມ້າ | ເດີນທາງທິວທອດ | |
| | ມາພົ້ນນ້ຳ | ໃນສ້າງເບິ່ງດາຍ | ນັ້ນແລ້ວ |
| ໘໕ ພັນ | ຄືດັ່ງປາຂວງຂ້ອນ | ໃນນານ້ຳເຂີນຂາດ | |
| | ຝົນບໍ່ຕົກຢາດຍ້ອຍ | ກາແຮ້ງຊິສວນກິນ | |

ລືວ່າ ຄືດັ່ງນາຂຶນນ້ຳ ຝົນຕົກແຮງບໍ່ໄຫ້ງ່າຍ
ຝົນຕົກແຮງຈັ້ນງ ໄຫຼໄປໄຫ້ງແຕ່ບວກຄວາຍ ນັ້ນແລ້ວ
ຊາດທີ່ ກາໂກແຮ້ງ ສແວງໂຄງຄວາຍເນົ່າ ນ້ອງເອີຍ
ເມືອງວັນຊຽວຫົວຍຸ້ມເປີ້ຍ ກາແຮ້ງຕອດກິນ ນັ້ນແລ້ວ
ພີ່ກໍ ດອມຈິດຕັ້ງ ມະໂນໃນຂັນທາດ
ຄືດັ່ງສົກຊິແຕກມ້າງ ເຫັນນ້ອງຕ່ອນສະເໜ ນ້ອງເອີຍ

ທຽມດັ່ງ ກາເຫັນກ້ວຍ ສຸກເຫຼືອງສແວງຕອດ
ແສນຊິຫວານແຊບຊ້ອຍ ກາເຕັ້ນແສ່ວກິນ ນັ້ນແລ້ວ
ນ້ອງບໍ່ ຜາຍໂຜດອ້າຍ ຈິດທະຈອດທະລາຍມູດ
ເໝືອນດັ່ງປາປິ້ນໜົກ ສ່ວນຊິຕາຍກາງແຈ້ງ
ພີ່ໄດ້ ມາເຫັນນາງນ້ອງ ຄືປາສແວງເຫຍື່ອ ນ້ອງເອີຍ
ຄືຄວາຍເຖົ້າເຫັນຫຍ້າອ່ອນອ້ວນ ກິນແລ້ວຫາກອຸ່ນໃຈ ນັ້ນແລ້ວ
ພີ້ນ ດອມຈິດຕັ້ງນົງແພງ ຈົ່ງມາຈອດແວ່
ພີ່ຂໍເຊີນຈອດຢັ້ງ ຄາວນ້ອຍເພິ່ງພາ ແດ່ຖ້ອນ
ເຈົ້າຜູ່ ເດືອນໜົກໜ້າ ໃຜຊິລົງມາຮ່ວມ ນາງນໍ່
ໃຜນໍ່ ຊິມາອູ້ມມັດກ້າ ພານ້ອງກ່ໜ້ານາ
ເຈົ້າຜູ່ ຈຸບຸໜ້າພຣະຈັນເພງ ສຸດທະແຈ່ມ ນ້ອງເອີຍ
ໃຜນໍ່ ຊິໄດ້ເຂົ້າຢູ່ຊ້ອນ ທຽມຂ້າງເພື່ອຊິນອນ
ເຈົ້າຜູ່ ງາມເອ້ອເຊ້ອ ເຫຼືອໃຈເດັ້ນຕາມພຸ່ມ
ໃຜນໍ່ ຊິໄດ້ມາຂຶ້ນຫຍ້ມກ້ານ ກິນນ້ຳໂຕ່ງຕາມ ນ້ອງເອີຍ
ເຈົ້າຜູ່ ຍອດຊູ່ເປົ້າ ເຜາງອ່ອນຄືຊິຫວານ ເດນໍ່
ໃຜນໍ່ ຊິໄດ້ເດັດມາເຜາງ ປັ້ນເຂົ້າຮຽມຊິລົງຕຸ້ຍ
ພີ້ນ ທຽມດັ່ງພາຍເຮືອຂວັນ ທະເລຫຼວງບໍ່ມີຝັ່ງ

| | | | |
|---|---|---|---|
| | ຫາທີ່ຈອດບໍ່ໄດ້ | ບໍ່ເຫັນກ້ຳຝັ່ງແດນ | ນັ້ນແລ້ວ |
| ບໍ່ດັ່ງນັ້ນ | ຄືດັ່ງຈອກຢູ່ນ້ຳ | ຮາກຢັ່ງບໍ່ເຖິງດິນ | |
| | ໄຫຼວົນໄປວົນມາ | ໂລດບໍ່ມີເຝືອຍຄ້າງ | |
| | ວ່າຊິຄ້າງເຝືອຍຜັກ | ຢ້ານເພິ່ນຖາງ | ນ້ອງເອີຍ |
| | ວ່າຊິຄ້າງເຝືອຍບາງ | ກໍຢ້ານເພິ່ນໄລ່ | |
| | ໃຈອ້າຍວ່າຊິມາຢູ່ຄ້າງ | ດອມນ້ອງເພິ່ງບຸນ | ນີ້ແລ້ວ |
| ເຈົ້າຜູ້ | ເປັນຕໍ່ກະຍູງແລ້ວ | ຄວາຍສີບໍ່ຮອນໂດ່ນ | |
| ເຈົ້າຜູ້ | ໂພນໃຫຍ່ແລ້ວ | ສູມໄງ້ບໍ່ທ່ອນຕິງ | |
| | ຄືດັ່ງເສລາກ້ອນ | ລົມຕີບໍ່ອຽງອ່ວຍ | ໄດ້ແລ້ວ |
| | ລົມສີ່ອູ້ມທ້າອູ້ມ | ມາຕ້ອງກໍບໍ່ຫວາຍ | ນັ້ນແລ້ວ |
| ພີ່ນີ້ | ຄືດັ່ງນົກເຈົ້າເຝົ້າ | ໜອງປາໄວ້ຖ້າເພິ່ນ | |
| | ເມື່ອເຈົ້າຂອງມາຮອດແລ້ວ | ບິນເຈ່ຍເຈີດໜີ | ນ້ອງເອີຍ |
| ພີ່ນີ້ | ທຸກບໍ່ເຫືອດບໍ່ມົ້ວ | ແດັນດັ່ງໃບຜັກ | ນ້ອງເອີຍ |
| | ທຸກແຕ່ໃບສົງສານ | ຄອບເລີງບໍ່ມີເວັ້ນ | |
| ເຈົ້າຜູ້ | ດອກຕາດເຫົວ | ກ້ານກ່ອງບົວບານ | |
| | ນ້ອງມີສົມພານເພິ່ງ | ໃຫ້ແບ່ງປຸນຫາອ້າຍ | ແດ່ຖ້ອນ |
| ໃບເຫຼືອ | ມາບໍ່ຫຸ້ນກ້ານ | ຊິຮານເສັຍກໍໜ້າກີ່ງ | ແລ່ນ |
| ອົດຜໍ່ | ໄດ້ປັ່ງໃຫ້ | ລ່າດ້ວດອກຫອມ | |
| | ຜໍ່ໄດ້ເດັດດົມເຫຼັ້ນ | ຫອມສະອອນທັດດອກ | ແດ່ແມ |
| ໃຈອ້າຍ | ພວມຫຍອແຫ້ງ | ດົມແລ້ວຊິຊື່ນບານ | ແທ້ແລ້ວ |
| ພີ່ກໍ | ເດີນຫານ້ອງ | ສົງສານຫຼາຍຊາດ | |
| ເທື່ອນີ້ | ມາຈອບນ້ອງ | ມະໂນບີ້ບ່ອນໃຈ | ແທ້ດາຍ |
| ເມື່ອບໍ່ | ໄຂປາກເວົ້າ | ກໍຈັກຂາດຄຳຮັກ | ນ້ອງເອີຍ |

ໃຫ້ນ້ອງມາຍຽງຊາຍ ຈັກອຸ່ນທວງຊິຜ່ໄດ້ ບຸເດ
ຊື່ວ່າ ນັບຊາດບໍ່ໄດ້ ເໝືອນແຮ່ຊາຍສະໝຸດ
ພີ່ບໍ່ ລືມແພງສີ ຂອດກະໃຈມາຍມ້າງ ໄດ້ແລ້ວ
ພີ່ນີ້ ມັກນ້ອງເພົ້າ ພຽງພະໂຍມລືສະຫວ່າງ
ຈິດທະຈອດຝັ້ນ ແຝງເນື້ອບໍ່ຮ່ວມຄີງ ນ້ອງເອີຍ
ຄິດຈັກ ແຝງຮ່ວມຊ້ອນ ກ້ວກິ່ນຊົມສອງ
ຜາງທ່ ແພງເພົ້າສີ ບໍ່ໃຫ້ຮຽງຖະໜອມຕຸ້ມ
ຮັກຮ່ວມ ສອງສະເໜຫາງົ້ວ ຄືຊິເຖິງມະເຮືອງເຜົາ
ຈິດພີ່ ກໍ່ມອບໃຫ້ນ້ອງ ພໍ່ຮູ້ຮ່ອມໃຈ
ພີ່ຮັກນ້ອງ ພິຣົມເສີນເສັງເປົ່າ
ລືມນ້ອງ ບໍ່ຕັບຜັກໜົ້ງ ຊິລືມເຜາງຊ້ວແຈ່ວ
ອົດພໍ່ ເຜື້ອນສຽງໝັ້ ພໍ່ຕົ້ມຊຽດດອມ ແດ່ຖ້ອນ
ໂອ່ນ ຊາດທີ່ດວາຍບໍ່ກີນກຽງຫຍ້າ ແສນຊິຂົ່ມເຂົາຫັກ
ໝູບໍ່ກີນຮຳ ຢ່າໄປຖຸຍດັ່ງເວົ້
ຄືດັ່ງ ອື້ວບໍ່ຍຸ້ງບຸ່ມຝ້າຍ ແສນຊິປ່ອນກໍ່ຫາຫາຮຸນ
ພີ່ນີ້ ຄືດັ່ງແສງທີ່ງທ້ອຍ ລົງກ້ວຕາຄອກພົງ ນັ້ນແລ້ວ
ບໍ່ຄື ທ່າມະໂລງເຫຼື້ອມ ເຮືອງແສງໃສຮຸ່ງ
ບໍ່ຄື ມະນີໂຊດເຜົ້າ ຕົມກ້ວບໍ່ທ່ອນໝອງ
ບໍ່ຄື ມະນີໃສໂຮງແສງ ຕາຄົດດີນບໍ່ໝອງເສົ້າ
ໂອ່ນ ພີ່ຢາກຖາມຂ່າວ ຝົນຊາວທັກຂັນດີເນື້ອຖີ່
ຢ້ານແຕ່ ອົກນ້ອງບໍ່ເຕື້ອງ ຊິອາຍໜ້າເນື້ອລຸນ ເຈົ້າເອີຍ
ໂອ່ນ ຄ່ານໍ່າໃຫ້ເປັນຄ່າແທ້ ມະນີແດງທາງເທດ
ນ້ອງຢ່າ ສັບພໍ່ເຂົ້າ ທອງຕາເຜ່ນບໍ່ຄວນ ນັ້ນແລ້ວ

| | | | |
|---|---|---|---|
| ຊາດທີ່ | ຫີນແລງແທ້ | ຝັງດິນກໍດູໜັ່ນ | |
| ອັນຊິ | ໃສດັ່ງແກ້ວ | ພິທູນນັ້ນກໍບໍ່ໃສ | ເຈົ້າເອີຍ |
| ໂອບໍ່ | ຊາດທີ່ອ້ອຍກໍຫາກຫວານແຕ່ອ້ອຍ | ເຊື້ອຊາດທັມມະດາ | |
| ເລົາກໍ່ | ຫາກຫວານພໍ່ເລົາ | ບໍ່ທ່ອນຫວານປານອ້ອຍ | |
| | ຊາດທີ່ເຂົາຮ່ຫ້າງ | ແຮງຂິວຂົມເຝື່ອນ | ຮືນແລ້ວ |
| ແສນຊິ | ເອົາມາຄ້ຽວສິ່ງອ້ອຍ | ໃບໜັ້ນກໍບໍ່ຫວານ | ດອກນາ |
| | ເຊື້ອຊາດມ້າ | ບໍ່ມີຫູກຕາກະແສ | |
| | ຈັກທະຍານຕາມລົມ | ເພື່ອດູເຊີງເຕັ້ນ | |
| ມາອິນດູ | ເປັດເດ່ | ປາກຂັບຍານສເມີໄກ່ | |
| | ບຸນບໍ່ນ້າວສົ່ງໃຫ້ | ຊິຂັນໄດ້ບໍ່ມ່ວນຍິນ | ດອກນາ |
| ອີ່ຕົນ | ແຂ້ຫາງຍາວງ | ສັງບໍ່ໄດ້ຮອງນັ່ງ | ເດນ່ |
| ບາດວ່າ | ກະຕ່າຍກະແຕຫາງກ້ອມງ | ສັງມາໄດ້ນັ່ງຮອງ | |
| ໂອບໍ່ | ພີ່ຢາກຕັດກິ່ງກ້ານ | ຮານວ່າຄຸງກົກ | ແລນາ |
| ດັນບໍ່ | ໄດ້ມີດແຜນດ້ວງ | ດວງແກ້ວບໍ່ທ່ອນຍອມ | |
| ຕົກກະເທີນ | ວ່າຊິລົງຝັນໄມ້ | ຊິບ່າຮອນໝົດທຸກງ່າ | |
| ມີດບໍ່ບ່ານ | ຂວານບໍ່ເປ້ | ຈ່າປອງແມ່ນບໍ່ຍອມ | ແທ້ແລ້ວ |
| ເມື່ອຊິ | ໄຂລະຫັດໃຫ້ | ເຄືອງໃຫ້ນ້ຳຊິເຝືອດ | |
| | ເມື່ອຊິເວົ້າຕໍ່ຊ້ຳ | ກະບຸງດັ້ງກໍຫາກເຄືອງ | ນັ້ນແລ້ວ |
| ໂອບໍ່ | ເທັກສັງມາໝາງເໝັ້ນ | ເວນຊຸງຜົມຂິວໝວກ | |
| ຊາດທີ່ | ໝອນແຮລ້ວ | ຊິຊຸງຫົວຂິວເຮືອດ | ເສັຍລື |
| ພີ່ກໍ | ຟາງແຕ່ນ້ຳຖ້ວມບ້ານ | ເດືອນຫ້າລວດເມືອງ | |
| ເມື່ອຊິ | ໄຂລະຫັດອ້ອຍ | ກໍເປັນລຳປ່ອງຖີ່ | ນ້ອງເອີຍ |
| ເມື່ອຊິ | ເວົ້າຕໍ່ກ້ວຍ | ກໍຄາຂ້ວນຄອບເຄືອ | |
| ເມື່ອຊິ | ໄຂລະຫັດຝ້າຍ | ກໍຄາໃນແຂນຄວ່າງ | ເດນ່ |

ເຈົ້າຜູ້ ປັນຍາເຫຼື້ອມ ເຂັມແຫຼມໃຫ້ເຈົ້າເຍ່ ມາຖ້ອນ
ຈັກຊິ ເປັນແສດສື້ວ ໃດແທ້ບໍ່ດີ ເຈົ້າເອີຍ
ແນວຜືນຜ້າ ກໍ່ລືຊາໃໝຍອດ
ຄຶດຢາກຫຍຸມແຜບໃກ້ ສະໃບຜ້າກໍ່ຂາດກາງ ນ້ອງເອີຍ
ຄັນວ່າ ໝາຫົງເຈົ້າ ຢາກຈົງໃຈຮັກທ່
ເປັນດັ່ງ ມອດບຸ່ນໄມ້ ກະຈອນແຫ້ງໝຸ່ນຜົງ ນັ້ນແລ້ວ
ຊາດທີ່ ໃບບົວຂ້ອງ ຕີນສານມາບໍ່ຂາດ
ຕີນເປັດໄກ່ຢຽບຂ້ອງ ສັງມາໄດ້ຂາດກາງ ບໍ່ຮູ້
ອັນວ່າ ຕານສອງຕົ້ນ ລ່າໃດຍັງເປັນເຜົ່າ ນ້ອງເອີຍ
ແຕ່ວ່າ ສູງໃຫຍ່ຄົ້ວ ສົມແທ້ທໍ່ກັນ
ແໜງທ່ ມີຕົ້ນນ້ອຍ ຊອນຂຶ້ນປົ່ງໃບ ບໍ່ຮູ້
ລື່ວ່າ ຊອນກັບຂຶ້ນ ຈີມກັບມີມາ ນ້ອງເອີຍ
ພໍ່ຊິ ໄດ້ຕັດກະບອກໄມ້ ພໍ່ໄດ້ໂຕ່ງຕານ ນັ້ນແລ້ວ

ທ້າວຄ່າສອນ ພົບສາວກ່າຜ້າ

ຫ້າມຈຳໜ່າຍ

ບັດນີ້ ຄ່າສອນທ້າວ ສແວງຫາເມັຍມິ່ງ
ຫຼ່ອຫາ ສາວໝຸ່ມນ້ອຍ ຕາມບ້ານຮູບງາມ
ທັງໃຫ້ ຖືສະໂຫຼກເຈົ້າ ນັກປາດມະຫາເຖນ ປາງນັ້ນ
ສແວງຫາ ຍິງລັກສະນະດີ ດັ່ງເຖນສອນໃຫ້
ປະສົງ ເອົາມາຫຼຸມຊ້ອນ ເປັນເມັຍກັບປະທີບ
ຈຶ່ງໄປ ເຫັນສາວກ່າຜ້າ ເຮືອນນ້ອຍຖູບຕອງ
ບາງໄດ້ທຸກຍາກແຄ້ນ ເປັນຍິ່ງຂໍທານ ເຈົ້າເອີຍ

| | | | |
|---|---|---|---|
| | ພໍ່ແມ່ຕາຍປະ | ແຕ່ເມື່ອນາງຍັງນ້ອຍ | |
| | ນາງເພິ່ງອາວອາປ້າ | ວັງສາລຽງໃຫຍ່ | |
| | ອາຍຸສິບຫົກຂວບເຂົ້າ | ມາທ້າວຈອບນາງ | ແທ້ແລ້ວ |
| ເຈົ້າຜູ່ | ປິ່ງສິ່ງໜ້າ | ງາມຍິ່ງກິນນະຣີ | |
| | ບາຄານເຫັນ | ຫລຸດທວງທັງສະອື້ນ | ນັ້ນແລ້ວ |
| ນາງນັ້ນ | ແອວກົມສ້ວຍ | ຫາງຕາຄື້ວກ່ອງ | |
| | ນົມຕຸ່ມຕັ້ງ | ຈູມຄ້ອງໄປປານ | ແທ້ດາຍ |
| | ນິ້ວລຽບກຽງ | ເໝືອນດັ່ງທຽນສິງ | |
| | ຄໍກົມງາມ | ໄປປານນາງຟ້າ | |
| ແຕ່ວ່າ | ກັບລະຍານາງເຜົ້າ | ປະຖົມການຕົກຍາກ | ແທ້ແລ້ວ |
| ພໍ່ເມື່ອ | ວັຍເຖິງຂຶ້ນ | ນາງໄດ້ຮຸ່ງເຮືອງ | |
| | ເຖົ້າແກ່ແລ້ວ | ສຸກຍິ່ງຍືນຍາວ | ເຈົ້າເອີຍ |
| | ຈັກໄດ້ເປັນເສດຖີ | ເມື່ອວັຍກາງແທ້ | |

ນາງປາງຄຳ ຈາຕ້ານກັບທ້າວຄຳສອນ

| | | | |
|---|---|---|---|
| ປາງນັ້ນ | ນາງກ່າວຕ້ານ | ຈາຕໍ່ບາຄານ | ວ່າ |
| ໂອ່ອ້າຍເອີຍ | ເນວຍິງນີ້ | ຄືກັນກັບດອກຫົ່ມ | ນັ້ນແລ້ວ |
| ຄັນວ່າອ້າຍ | ບໍ່ຫາໄມ້ແໜັນ | ດວງຄ້ວບໍ່ລົ່ນລົງ | ພີ່ເອີຍ |
| | ເນມນານເຊື້ອ | ສະກຸນຍິງຍົດຕ່ຳ | |
| | ຍິງຫາກສຸກຢູ່ຍ້ອນ | ບຸນສ້າງພໍ່າຜົວ | ແທ້ແລ້ວ |
| ເນມທ່ | ແຂ້ບີຕິຫາງໃຫ້ | ຊາວມອງບໍ່ຮູ້ເມື່ອ | ໄດ້ແລ້ວ |
| | ບໍ່ມີໃຜຊິຮູ້ໄດ້ | ວ່າມີແຂ້ເງືອກາງ | |

| | | | |
|---|---|---|---|
| | ນົກບໍ່ງູ່ບານເຮົວ | ປະຈິນາຍດົ້ນຢູ່ປົ່ມງ | ອ້າຍເອີຍ |
| | ແຮ້ວບໍ່ເປື້ອງປີ່ນໜ້າ | ພາແຮ້ງກໍ່ລ່າດາຍ | ນັ້ນແລ້ວ |
| ນ້ອງກໍ່ | ຄິດຕໍ່ໄມ້ກາງຕໍ່ | ດ້ວງມາບຸ່ນ | ພີ່ເອີຍ |
| | ຄິດຕໍ່ຄວາຍນົກຕູ້ | ຜັດຕາຍຈ້ອຍທ່ານກິນ | ແທ້ແລ້ວ |
| ຄິດຄັ່ງ | ເຮືອຊາວຄ້າທະເລຫຼວງ | ນ້ຳເຂີນຂາດ | |
| | ນ້ຳເລົ່ານົກຂາດແຫ້ງ | ເຮືອຄ້າງຢູ່ຫາດຊາຍ | ພີ່ແລ້ວ |
| ນ້ອງນີ້ | ຄິດຄັ່ງບຸບຜາຄ້ວ | ເລເຕເທີຍກິນ | ນັ້ນແລ້ວ |
| | ບໍ່ມີໃຜເບິ່ງສົ້ງ | ຕາໜ້ອຍກໍ່ບໍ່ຫຼຽວ | |
| ຄິດຄັ່ງ | ສາຂາໄມ້ | ໄພໄຮບໍ່ມີໜ່ວຍ | ສັງແລ້ວ |
| | ລູກບໍ່ມີຢູ່ຕົ້ນ | ພາອຸ້ງກໍ່ບໍ່ຕອມ | |
| | ເຜົ້າກໍ່ຍັງຕ່າງເຜົ້າ | ບໍ່ຄິດຄັ່ງຄວງມະນີ | ອ້າຍເອີຍ |
| | ເນວຮົງງແສງ | ໜ່ວຍຂວາງໃຜຊິຮູ້ | |
| ພີ່ຊາຍນັ້ນ | ຄືຈັນເທິງຟ້າ | ດາຣາຍ່ງງຄູ່ | ນັ້ນແລ້ວ |
| | ຍິງແສນຊິຮ້ອງຮ່ຳໄຫ້ | ບໍ່ມີໄດ້ທະນີ່ງຈັນ | ໄດ້ແລ້ວ |
| ຊາດທີ່ | ນາທານເຮື້ອ | ປະສົງທານແຕ່ກ້ານເຜົ່າ | |
| | ກ້ອອນມີບໍ່ແພ້ | ນາເຮື້ອບໍ່ປະສົງ | |
| ນ້ອງໄດ້ | ດອມຈິດຕັ້ງ | ປະສົງຊາຍຮຽງຮ່ວມ | ພີ່ເອີຍ |
| ຢ້ານທ່ | ຄືກົບຂູດຮ້ອງ | ເດືອນຫ້ານກ່ອນຝົນ | |
| ນ້ອງ | ປູກໝາກແຕ້ງໄວ້ | ກາງນາຖິ້ມເປົ່າ | ອ້າຍເອີຍ |
| | ຝົນບໍ່ມາຕົກຢາດຍ້ອຍ | ເລີຍຖິ້ມເປົ່າດາຍ | ແທ້ແລ້ວ |
| ອັນນີ້ | ມີແຕ່ລົມມາຕ້ອງ | ບໍ່ມີຝົນຈັກທ່າ | |
| | ຝົນບໍ່ຕົກເທົ່າໃຫ້ | ດິນຊິແຫ້ງໄງ່ຜົງ | |

| | | | |
|---|---|---|---|
| ຊາດທີ່ | ໝາເຫັນເຂົ້າຄານິ | ກໍເຕັ້ນສວບ | |
| ຖ້າບໍ່ | ມີປັ້ນເຂົ້າລໍ້ | ແສນຊິເອີ້ນກໍບໍ່ມາ | ພີ່ເອີຍ |
| | ຄືດັ່ງໝີກິນເຜິ້ງ | ເຫັນຄົນກໍເສີຍມັ່ງ | |
| | ແສນຊິເອົານ່າງຄ້ອງ | ດຶງໄດ້ບໍ່ໜ່າຍແໜງ | ແທ້ແລ້ວ |
| ຊາດທີ່ | ເສືອເຫັນເນື້ອ | ກວາງຟານແລ່ນໄລ່ | |
| | ມີໝາໃນແລ່ນລັດຕ້ອນ | ເສືອນັ້ນກໍພ່າຍໜີ | |
| | ຄືກາດ່າເຫັນທ່ເຂົ້າ | ຖຽງນາສັບຕອດ | |
| | ເຈົ້າຂອງມາຮອດແລ້ວ | ບິນເຈີ້ຍເຈີດໜີ | |
| ນ້ອງ | ຄືກາດ່າປີ້ | ຫຽມທົ່ງມັນຊິດ່ອງ | ຄືຫູ |
| | ບໍ່ຄືດັ່ງແສງທິ່ງທ້ອຍ | ຊິເສງສູ້ແຂ່ງຈັບ | ໄດ້ແລ້ວ |
| ຄືດັ່ງ | ຄົນບໍ່ສົມສ້າງ | ກາງຕາງບໍ່ສົມວາດ | |
| | ຄືດັ່ງຄວາຍບັກຕູ້ເຖົ້າ | ບໍ່ສົມເຈົ້າແອກໄຖ | ພີ່ແລ້ວ |
| ໂອນໍພີ່ເອີຍ | ເຈົ້າຢ່າໄປຫຍ່ອເວົ້າ | ເທິງບານມັນຊິດ່າ | |
| | ຢ່ານົວກິນໝາກຫວ້າ | ມັນຊິຊ້າດ່າທາງ | |
| ນ້ອງ | ເຄີຍໄປເຖິງບ້ານ | ໄດ້ຖາມຂ່າວຫາຄົນ | ພີ່ເອີຍ |
| | ໄປໃນດົງດອນ | ໄດ້ຖາມຂ່າວຫາໄມ້ | |
| | ໄປທາງນ້ຳ | ໄດ້ຖາມຂ່າວຫາຫີນ | ພີ່ແລ້ວ |
| ຊາດທີ່ | ແນວຊາຍຜົງ | ແຮ່ສະດອນໃນນ້ຳ | |
| ບໍ່ແມ່ນ | ມະນີນິນແກ້ວ | ຊາຍຜົງຫີນແຮ່ | ນັ້ນແລ້ວ |
| | ມີແຕ່ຫີນລ່ອງແກ້ງ | ໂຮຮ້ອງສັ່ງສຽງ | |
| ຊາດທີ່ | ດວງທອມຫຼ້າງ | ຂອງແພງສະເພົາເທດ | ພາຍພຸ້ນ |
| | ບໍ່ທ່ອນທອມຢູ່ລ້ອນ | ຄືຕູ້ແຜ່ນຈັບ | ແທ້ແລ້ວ |
| ອັນວ່າ | ນໍ່ນິນແກ້ວ | ຄູນໂຮງມັນຈັ່ງແມ່ນ | ອ້າຍເອີຍ |
| | ບໍ່ທ່ອນສົມສ່ຳເຊື້ອ | ນອນຊົ້ນຕູບຕອງ | ດອກນາ |

| | | | |
|---|---|---|---|
| ອັນວ່າ | ເຊື້ອຊາດນ້ອງ | ເໝືອນດັ່ງປູຫອຍ | |
| | ບໍ່ທ່ອນຄືປານົກ | ລາບນົວກິນໄດ້ | |
| ແມ່ນທ່າ | ແນວນາມເຊື້ອ | ຫອຍນາຕາຕ່າ | ນັ້ນແລ້ວ |
| | ບໍ່ທ່ອນງາມພ່າພຽງ | ຫອຍຫວ້າງບ່ອງທະເລ | |
| ມາຄືຕົນ | ເປັດເຕົ່າ | ຢາກງອຍຄອນຊ້ອນໄກ່ | |
| | ຕີນເປີ່ມເປະເປ່ມເປ້ | ງອຍໄມ້ກໍ່ບໍ່ເປັນ | |
| ອັນວ່າ | ນົກເຂົາຢູ່ຕຸ້ມ | ເຊົ້າຄ່ຳຂັນດູ | ກໍ່ດີຖ້ອນ |
| ແມ່ນຊິ | ນອນຄອນເງີນຄອນຄຳ | ກໍ່ບໍ່ລືມຄອນໄມ້ | |

## ນາງປາງຄຳ ຈາຕໍ່ຖາມຂ່າວທ້າວຄຳສອນ

| | | | |
|---|---|---|---|
| ໂອ່ນໍພີ່ເອີຍ | ເຈົ້າເອື້ອເຊື້ອ | ອ້າຍມີເມັຍແລ້ວຫຼືບໍ່ | |
| | ຕານ້ອງບໍ່ໄດ້ໃສ່ແວ່ນເຜົ້າ | ມອງແລ້ວກໍ່ບໍ່ເຫັນ | ພີ່ແລ້ວ |
| ມື້ນີ້ | ຕານ້ອງສັງມາມົວງຖົ້ວ | ຂົວນົວງນ້ຳເຂົ້າໜ້າ | |
| ບາດວ່າ | ຊູ້ມື້ບໍ່ໄດ້ເປັນດັ່ງນີ້ | ມອງແລ້ວກໍ່ສ່ອງເຫັນ | |
| | ສັງເລົ່າເປັນປະຫຼາດລ້ຳ | ຕາຊອບຫວງທິບ | ພີ່ເອີຍ |
| ດີດັ່ງ | ຕາຝາງຝຸບ | ມືດມົວເປັນຮ້າຍ | |
| ຫຼຸມດັ່ງ | ເຈັບຫົວຮ້ອນ | ຖືເນື້ອບໍ່ສ່າບາຍ | ພີ່ເອີຍ |
| ກໍ່ທ່າ | ຈິດທະຈອດອ້າຍ | ຫວັງຮ່ວມສະເໜຫາ | |
| ແມ່ນທ່າ | ປອງດວງຈິດ | ຮ່ວມນອນເມັງຊ້ອນ | |
| ເວນໄດ້ | ມາດືງນ້າວ | ສອງເຮົາໄດ້ຫ່າງ | ກັນແລ້ວ |
| ປະສົງ | ໂຮມໜ່ອມອ້າຍ | ໃຫ້ເປັນເຜື້ງແຜ່ນດຽວ | |
| ຜີແມ່ນ | ຂອງແລກໄດ້ | ເໝືອນດັ່ງກະທໍ່ເຕືອ | ພີ່ເອີຍ |
| ນ້ອງຈັກ | ເອົາມາແຈະ | ຈິດເຕັມດຽວນີ້ | |

| | | | |
|---|---|---|---|
| ຈັກຊິ | ເປັນເກືອກ້ອນ | ເຄັມຄືຄືເກືອສາ | ບຸເດ |
| | ແນວເປັນເກືອຖືກນ້ຳ | ປາເປົ້າລັກກິນ | ບໍ່ຮູ້ |
| ຫຼືວ່າ | ຈັກແປງຄວາມເວົ້າ | ກໍເຂົ້າແປງປາຈ່ອມ | ນັ້ນບໍ່ |
| | ກໍຈີກຕ່ອນປາແດກຈ້ຳ | ແສນຊິເອົາບ່ງາມ | ນັ້ນແລ້ວ |
| ອັນນຶ່ງ | ແນວນ້ຳອ້ອຍຍ້ອຍ | ຫາກຫວານຍິ່ງໄປເຫິງ | |
| ບໍ່ຄື | ຫວານຕານ | ແຕ່ພໍປາຍລີ້ນ | |
| ຊາດທີ່ | ພຸມພີແຂ້ | ໃນວັງແມ່ນ້ຳໃຫຍ່ | ພີ່ເອີຍ |
| ແສນຊິ | ເອົາໝາຂວ້ານນ້ຳ | ຍັງຂີ້ໃສ່ດັງ | ບໍ່ຮູ້ |
| | ເຈົ້າສັງມາລືມຖຸນເຖົ້າ | ແນວບັກຄ່າຖຸນຍິ່ງ | |
| ບາດທ່າ | ໄດ້ຕ່ອນຊີ້ນ | ປາຍປ້າງບໍ່ລ່າຄອຍ | ຊັ້ນບໍ້ |
| ເຈົ້າຢ່າ | ໄລລືມຖີ້ມ | ໝາກນາວສີຫວານເວີ່ | ພີ່ເອີຍ |
| ບາດທ່າ | ເຮັດລາຍກ້ອຍ | ຍັງຊິໄອ້ອ່າວໝາກນາວ | ຫັ້ນແລ້ວ |
| | ຕ່າປາແດກນີ້ | ໃຫ້ເກືອໃສ່ພໍດີ | |
| ລາງເທື່ອ | ມີໜອນລົງເຈາະ | ຢູ່ໃຫ່ບໍ່ມີຮູ້ | ໄດ້ແລ້ວ |
| ໃຜຊິ | ຫຼິງເຫັນໃສ້ | ຫົວໃຈຄົນໃຫຍ່ | ໄດ້ນໍ |
| ທາງປາກ | ຫວານດັ່ງນ້ຳອ້ອຍ | ໃຈສົ້ມດັ່ງໝາກນາວ | ນັ້ນແລ້ວ |
| | ບໍ່ທ່ອນຫຼິງເຫັນໄດ້ | ໃຈຊາຍຄິດໃຫຍ່ | ອ້າຍເອີຍ |
| ລາງເທື່ອ | ຝັງກຸ່ງໄວ້ | ໃນຫັ້ນໜີ່ນດວງ | ບໍ່ຮູ້ |
| ອັນວ່າ | ຄວາມປາກເວົ້າ | ຄືດັ່ງຊີກນກິນ | ແຫນໍ |
| | ໃຈສັງຂົມຄືເຂົາຮ໌ | ບໍ່ອາດມີໃຜຮູ້ | |
| ແນວລີ້ນ | ບໍ່ມີກະດູກນີ້ | ແປງເລດລວງສະເໜ | ພີ່ເອີຍ |
| | ຊາຍມີເມັຍຫຼາຍຄົນ | ໜ່ອມຮຽມບໍ່ມີຮູ້ | |
| ຕິຕາງ | ໃຫ້ນ້ອງດັ່ນໆດີ້ນ | ແຍງເງົາໃນແວ່ນ | ແທ້ເດ |

| | | | |
|---|---|---|---|
| ສັງຊິ | ໃຫ້ນ້ອງຄາດລາດລົ້ມ | ເດືອນຫ້າກ່ອນຝົນ | ບໍ່ຮູ້ |
| | ຕິຖຸແລງລົ້ມຕົມບໍ່ມີ | ຄາດລາດໝື່ນ | |
| ຈົນວ່າ | ກົ້ນຂີ້ຫັ່ງຈ້ຳ | ຕົນນ້ອງຊິປ່ອຍການ | ນັ້ນແລ້ວ |
| ແມວ | ເຮືອນບໍ່ມີຝາເອັ້ມ | ເດືອນສາມລົມຊິຖ່ | ພີ່ເອີຍ |
| ໄດ້ລູກນ້ອຍ | ບໍ່ແຂວນອູ່ຫ້ອຍ | ຊິອອຍໄດ້ແມ່ນບໍ່ນອນ | ພີ່ແລ້ວ |
| ມີວັງ | ແມວບໍ່ມີແຂ້ | ຊາວແຫຊິລົງທ່ອງ | |
| ມີສວນ | ບໍ່ມີຮົ້ວລ້ອມ | ຄວາຍຊິເຂົ້າຢ່ານອນ | ໄດ້ແລ້ວ |
| ມີສວນ | ຮົ້ວບໍ່ລ້ອມ | ຊິເປັນເຫຼົ່າຄວາຍຫຼຽວ | |
| ມີນາ | ບໍ່ມີເໝືອງ | ສ່ວນປູຊິກັດເຂົ້າ | |
| ມີມອນ | ບໍ່ມີມ້ອນ | ງົວຄວາຍຊິຫຼຽວທ່ອງ | ພີ່ເອີຍ |
| ມີນາ | ມີແຕ່ກ້າບັ້ງ | ດ່າໄດ້ກໍບໍ່ງາມ | ອ້າຍເອີຍ |
| ມີຮູ້ | ຕ່າງບ້ານ | ຄືຝາກໄຂ່ໄວ້ນຳກາ | |
| | ຄືໝົ້ນບໍ່ປິດຝາ | ສັງລັກໝີໄປໄດ້ | |
| | ເລືອກຫຼາຍຊິພໍບັ້ງ | ດ້ວງຊິບຸ່ນທາງໃນ | ພີ່ແລ້ວ |
| | ໃຜທ່ອນມີຕາທິບ | ສ່ອງເຫັນຕົວບົ້ງ | ໄດ້ແລ້ວ |
| ຊື້ມ້າ | ຖືກຂວັນປັ່ນພື້ນ | ຈັງໄຣໃຫຍ່ຈີບຫາຍ | ພີ່ເອີຍ |
| | ງົວຄວາຍຈີກປາກກິນຫາງ | ບໍ່ປະສົງປອງລຽງ | |
| ເຫັນວ່າ | ໄດ້ໜ່ອຍເຜົ້າ | ເຈົ້າຢ່າຟ້າວເປີ່ມກະໃຈຫຼາຍ | |
| ລາງເທື່ອ | ຮົງງໃສ | ໜ່ວຍຂວາງໃຜຊິຮູ້ | |
| ຊື້ເອົາ | ໂພນນາເຮື້ອ | ໃຫ້ຫຼົງດູໂພນປ່ງ | ແທ້ນີ |
| | ດອນປູ່ຕາເຈົ້າບ້ານ | ຄະນິງຖ້ອນບ່ອນຢາ | |
| ເພິ່ນວ່າ | ຈຽມຜີເຖົ້າ | ອາຍຸຍືນຮອດເຜົ່າ | |
| | ຈຽມພໍ່ແມ່ເພື່ອນບ້ານ | ປາເຈົ້າຫາກຢູ່ເຢັນ | ນັ້ນແລ້ວ |

| | | | |
|---|---|---|---|
| ອິດສາ | ຈັ່ງຄວາຍບັກເລ | ໄວ້ຖ້າເບິ່ງ | ແດ່ຖ້ອນ |
| ຍາມຝົນ | ຍັງຊິໄດ້ເຜົ່າກ້າ | ເດືອນຫ້າຍັງຊິໄດ້ໃສ່ໄຖ | ພີ່ແລ້ວ |
| ນ້ອງນີ້ | ທຸກຕ່ອມເຕາະຕ່ອມຕ້ອຍ | ປາກກ່າກິນມັນໝາກ | |
| | ຄັນບໍ່ກິນໝາກມັນ | ປາກບໍ່ດ່າປານນີ້ | |
| ນ້ອງນີ້ | ທຸກແຕ່ນ່າຂັບທ້າ | ໂຮມມາຮອດຂັບສີ່ | ອ້າຍເອີຍ |
| | ທຸກແຕ່ໃນໂລກນີ້ | ມີນ້ອງຜູ້ດຽວ | ນີ້ແລ້ວ |
| ຄິດໄປ | ຫາຍນັບມື້ຫຍຸ້ງ | ມຸງມາດີຮາກໄຜ່ | |
| ຄິດໄປ | ຫາຍນັບມື້ກວ້າງ | ດີຊ້າງຢູ່ດົງ | ນັ້ນແລ້ວ |
| | ບົວຂີ້ແບ້ສັງ | ໄປເກີດກາງໜອງ | ແທ້ນໍ |
| ບົວທອງ | ສັງໄປເກີດທົ່ວ | ສວນບ້ານເກົ່າ | |
| ທີ່ເລິກ | ມາເລົ່າຕື້ນ | ສັງໄປທ້ອງແຕ່ບ່ອນເຂີນ | ເຈົ້າເອີຍ |
| | ນ້ຳກວ້າງຕື້ນ | ຢ່າຟ້າວກ່າວໄປສາ | |
| | ບໍ່ທ່ອນດີວັງໜອງ | ໝູ່ປາຊິວຂ້ອນ | ພີ່ເອີຍ |
| ເມື່ອເຈົ້າ | ກິນໝາກຄ້ຳ | ກາງປ່າຢ່ານາງ | ແທ້ນີ |
| ລາງເທື່ອ | ກິນບໍ່ດ່າເບິ່ງທ້ອງ | ຊິຫຽວຂີ້ຍັ່ງດີນ | ນັ້ນແລ້ວ |
| ເຈົ້າສັງ | ໄລນາເຮື້ອ | ໜີໄປດ່ານບາຊ່າວ | ແທ້ນໍ |
| ລາງເທື່ອ | ຝົນບໍ່ຕົກຢາດຍ້ອຍ | ດ່າໄດ້ຊືປ່ວຍການ | |
| | ນົກເຂົາລົງກິນກ້າໃນນາ | ສັງບໍ່ໄລ່ | |
| ບາດວ່າ | ນົກຈິບນົກຈາບໂຕນ້ອຍໆ | ສັງມາປ້ອຍວ່າທ່າກີນ | ເຈົ້າເອີຍ |
| ດີດັ່ງ | ໝູໝາກິນເຂົ້າກິນຮ່າ | ບໍ່ໄດ້ວ່າ | ນັ້ນແລ້ວ |
| ບາດວ່າ | ໄກ່ບັກໂຈ້ນກິນເຂົ້າກ້ອງ | ສັງມາຮ້ອງວ່າໄລ່ເຊີະ | ບໍ່ຮູ້ |
| | ດີຜູ້ໃຫຍ່ຕ່າເຕາະຖ້ວຍ | ຍັງເອີ້ນວ່າ ເຜວງ | |

ຜູ່ນ້ອຍຕ່າຖ້ອຍໂຖ    ຕາບໍ່ມືນຕາບມຸ້ນ    ນັ້ນແລ້ວ
ເຈົ້າສັງ    ເອົາບຸນບົມຄົ້ງ    ໄປຮອງຮັງໄກ່
ບາດວ່າ    ກະຕ່າບຸງຂາດມີບໍ່ແພ້    ຕົນເຈົ້າບໍ່ຮອງ    ພີ່ເອີຍ
ຄືດັ່ງ    ຄົນກວາດບ້ານ    ໄດ້ນັ່ງຫຼຸມຂຸນ    ນັ້ນເດ
ແນວຄົນດີ    ເພີ່ນບໍ່ມີຕາເຜົ້າ
ອັນນີ້    ນ້ອງໄດ້ອຸປະມາໃຫ້    ຜຍາເຮືອງຫິງເບິ່ງ    ພີ່ເອີຍ
ຢ່າໄດ້    ຍຸດໃຫ້ນ້ອງ    ຮານໜັ້ຝອກໃຫ    ແທ້ນີ.

ປາງນັ້ນ    ຄ່າສອນທ້າວ    ຟັງນາງເວົ້າພ່ອນຖືກໂສກແທ້ນາງເຜົ້າຕອບຂານ ນາງນັ້ນຊື່ວ່າ    ນາງປາງຄ່າເຈົ້າຄ່າສອນຕ້ານກ່າວນາງເວົ້າຈ້ອຍໆຄ່າສອນທ້າວນັ່ງຟັງ ທ້າວກໍມັກຫຍຸ້ງແທ້    ປະສົງແຕ່ງເປັນເມັຍ    ຖືກໂສກມະຫາຖຸນ    ຍອດຍິງແປງສ້າງ ຊື່ວ່າເປັນນາງເຜົ້າ    ຍິງສອງສມີແວ່ນ    ມະຫາຖຸນແຕ່ງໃຫ້    ເຫັນແລ້ວຖືກກະໃຈ ຖືກລັກສະນະແທ້    ດັ່ງໂສກຍິງດີ    ບໍ່ໄດ້ມີທາງຕິເຍື່ອງປະມານພໍ່ນ້ອຍແໜງທີ່ເປັນ ສາວຈ້ອຍ    ເຂັ້ນໃຈທຸກຂະໜອດ    ເປັນກ່າພ້າເຮືອນຢ້າວຕູບຕອງ    ແທ້ແລ້ວ    ຄ່າສອນ ທ້າວສັນຍາວຄົນປ່ຽວ    ພໍ່ແມ່ຖິ້ມແຕ່ນ້ອຍ    ຮັດສີເຈົ້າອິດູ    ເພີ່ນຈຶ່ງໄດ້ລ້ຽງໄວ້ສອນສັ່ງ ທາງດີ    ທ້າວຄ່າສອນບໍ່ມີຄວາມ    ທີ່ເມັດງາຈອມກ້ອຍ    ນົງນາງນ້ອຍ    ປາງຄ່າ ບໍ່ມີຕ່າງ    ຍາດພີ່ນ້ອງສອນແລ້ວຈື່ຈ່າ    ແທ້ແລ້ວ.

ສາຍມິ່ງກຸ້ງວປາງກ່ອນສາຍແນນ    ບຸບພະກັມປາງຫຼັງຈ່ອງດຶງໃຫ້ມາພົ້

ຜົວເປັນເທວະບຸດແທ້ ສແວງຫາເມັຍມິ່ງ ເມັຍເປັນເທວະດາ ໄດ້ພົ້ບຸນກວ້າງສົ່ງສະ
ໜອງ ເມນມິ່ງນັ້ນດີດັ່ງສາສນາ ນັ້ນແລ້ວ ບາຣະມີມຸງ ເພື່ອມງ່ານວມກົ້ງ ວາ
ສນາເຄີຍສ້າງກອງບຸນຊາດກ່ອນ ເຄີຍໄດ້ຕັບດອກໄມ້ ໃນຕົ້ນຮ່ວມກໍ່ ເຄີຍມີກະໃຈ
ຕັ້ງກອງບຸນຮ່ຽງຮ່ວມຜົວເມັຍ ແສນຊິໄປຄົບທາງຕິດກັນຄົນເກົ່າ ເມ່ນຊິປາຖນາເອັ້ນ
ກໍຍັງນ່າຮ່ຽງຮ່ວມກັນດາຍ ໜີບໍ່ມົ້ນ ເວນກ້ຽວຊາດລຸນ ເມນທໍ່ ສອງປະສົງເອັ້ນ
ພາຍລຸນຈິ່ງຈ່າຈາກ ຜົວ່າ ຜົວບໍ່ເອັ້ນໃຈຂ້ອງຕໍ່ເມັຍ ຈັກໄດ້ກັນຫ່ຽງແທ້ບໍ່ເຫີນຫ່າງ
ສາຍເມນ ເໝືອນດັ່ງວອນກົດຕິທ້າວ ໃນນິທານນັກຈອກ ຕາມທາຈັນທະຈອນບາດ
ນ້ອຍ ເປັນເຜົ້າມິ່ງເມັຍ ແທ້ແລ້ວ.

ປາງເມື່ອ ນາງປາງຄ່າເຜົ້າ ຄ່າສອນຮ່ຽງຮ່ວມ ກັນນັ້ນ ຖືກລັກສະ
ນະໂສກແທ້ການສ້າງມັ່ງມີ ເປັນເສດຖີສືບສ້າງ ເມືອງໃຫຍ່ພາຣານະສີ ມີເງິນຄ່າ
ແສນໝື່ນກີກອງລ້ານ ບັນດິດເຈົ້າ ເທສນາສອນສັ່ງໄວ້ແລ້ວ ໃນສາສນາຊາດກ່າວໄວ້
ພຸທໂທເຈົ້າເທສນາ ປາງເມື່ອເປັນຄ່າສອນທ້າວແປງເຮືອນໃຊ້ຊາດ ນັກປາດເຈົ້າສ່າ
ແຕງໄວ້ແຕ່ປະມານ ຂໍໂຍຕິກາໄວ້ຄ່າສອນຊາດກົຫ່ຳ ແລ້ວທ່ານີ້ຖວາຍໄວ້ທີ່ຄວນກ່ອນ
ແລ້ວ.

ອັນນີ້ ໄດ້ມາຈາກບ້ານຄ້ ໜັງສືຕ່ຳໃບລານ
ທ້ວພໍ່ຜາງເອົາມາ ຖວາຍແຕ່ງຄວາມໃຫ້ດີໄວ້
ຂໍເຜົ່າບັນດິດເຈົ້າ ຜທິນັກປາດ
ໄດ້ຮູ້ແຈ້ງຟັງແລ້ວ ຢ່າໄດ້ຕຽນ ທຽວເທີ້ນ
ຂໍອຸທິສາບຸນໃຫ້ ສັພພະສິ່ງໃນໂລກາ
ຂໍໃຫ້ສຸກຢູ່ລ້ອນ ກະເສີມສ້າງທົ່ວກັນ ເຈົ້າເອີຍ
ບ່ຣະບອນແລ້ວ ຄຳສອນໄວ້ກ່ອນ
ໂຍທິກາທ່ານີ້ ຖວາຍໄວ້ທີ່ສູງ ນັ້ນແລ້ວ.

ພຣະອະຣິຍະນຸວັຕຣ໌
໒໕ ພຶສພາຄົມ ໒໕໑໗

24 / VII
ห้ามจำหน่าย

## ແປຄຳສັບຈຳນວນນຶ່ງ

| | |
|---|---|
| ກາສາ | ຜ້າແພຖື |
| ກອຍໃຈ | ເອົາໃຈໃສ່ |
| ຂະນັງ | ແຄັນຢູ່ໃນໃຈ |
| ຄິດແງ່ເງື້ອນ | ມີລູ່ມລາຍ ກົນອຸບາຍ |
| ເສລາ | ພູເຂົາ ຫິນ |
| ສຸພະ | ຄວາມດີງາມ |
| ເທັຍຣະຄາ | ຍືນຍົງ |
| ນິດທະໝ່ງ | ນອນຫລັບ |
| ໝັຍຣະສິນ | ບໍ່ມີສິນ |
| ມຸກຂັງ | ໜ້າ |
| ປະທີບ | ແສງສວ່າງ |
| ຜະຍງ | ແນະນຳ ບອກກ່າວ |
| ພັງ | ຄື ເໝືອນ ສໝິ ທໍ່ກັນ |
| ເພີ້ | ຈົ່ມ ປາກຢ່າງບໍ່ມີສະຕິ |
| ພັນທະນັງ | ກ້ຽວກອດ ພັນກັນ |
| ພະໂຍມ | ຟ້າ ອາກາດ |
| ເຟືອຍ | ງ່າ ຫລືເຄືອໄມ້ທີ່ຢອນ ລົງ ລາກດິນ ຫລືຈົມນ້ຳ |
| ເລດ | ສະແດງໃຫ້ຮູ້ໃນອາການ |

ຈິບຈິາ — ລັກສະນະ ຂອງຜົມທີ່ຂອດເຂົ້າ ແຫຼມ ຄົ້ນນ້ອຍໆ

ແວນ — ມາກ ຫຼາຍ

ຮຸນ — ອິດ ເຜື່ອຍ ເຫຼືອແຮງ